http://fr.groups.yahoo.com/group/Groupe_Vethi_Paxathipatay_lao/message/23169

To: groupe_vethi_paxathipatay_lao@yahoogroupes.fr
From: "prasith prasith" <prasith_fr@.....>
Date: Fri, 18 Nov 2005 16:09:05 +0100 (CET)
Subject: [Groupe_Vethi_Paxathipatay_lao] Thao Keo et Thao Kham

*ສບາຍດີ ທ່ານຜູ້ອ່ານ*

*ມື້ນີ້ ຈະໃຫ້ທ່ານໄດ້ພົບກັບ ທ້າວແກ້ວ ແລະ ທ້າວຄຳ ອີກ ເພາະທັງສອງ ມີຂ່າວ ຢາກເຜີຍ ໃຫ້ທຸກຄົນໄດ້ຊາບ ແຕ່ກ່ອນນັ້ນກໍຢາກໄຂວົງເລັບນ້ອຍນຶ່ງເພືອແຈ້ງວ່າ ມີການປະທ້ວງ ທາງໂທຣະສັບກ່ຽວກັບເຣື່ອງພາສາລາວ ເມື່ອສອງມື້ກ່ອນນັ້ນວ່າ ການທີ່ ປຣະສິທ ບອກວ່າ ພາສາລາວນີ້ພວກລາວແດງບໍ່ຟັງຄວາມໃຜ ເພາະເຂົາ ຟັງແຕ່ ຄວາມເຂົາເອງ ທ່ານຜູ້ຫວັງດີຜູ້ນັ້ນ ໄດ້ປະທ້ວງວ່າ ເວົ້າຜິດ ທີ່ແທ້ນັ້ນຄວນ ເວົ້າວ່າ ລາວແດງ ບໍ່ຍອມຟັງຄວາມໃຜເດັດຂາດ ນອກຈາກຄວາມແກວແດງ ບ່ອນດຽວ ຈຶ່ງຂໍໃຫ້ທຸກຄົນຮັບຊາບໄວ້ນຳກັນ ແລະຂໍຂອບໃຈທ່ານຜູ້ຫວັງດີ ມານະ ໂອກາດນີ້ດ້ວຍ.*

ພົບກັບທ້າວແກ້ວແລະທ້າວຄໍາຕໍ່ໄປນີ້ :

ຄ. ຈັ່ງໃດສະບາຍ ດ່ອຍຢູ່ບໍ່ ?
ກ. ເຫັນຫນ້າກໍເອີ້ນສະບາຍ ໂລດເນາະ ເມື່ອຍເດ້
ຄ. ອ້າວ ເຮົາກໍບອກແລ້ວເດວ່າ ເຮົາຈະບໍ່ປ່ຽນ.
ເອີ ໄດ້ຍິນວ່າວານນີ້ ໂຕໄປສະຖານທູດ ເປັນແນວໃດ ?
ກ. ກໍມີຂ່າວໃຫມ່ເລັກໆນ້ອຍໆ ແຕ່ຂ່າວທີ່ຈະເວົ້າໃຫ້ຟັງນີ້
ເຮົາໄດ້ຍິນມາແຕ່ທາງອື່ນ
ຄ. ອີ່ຫລີວະ ຂ່າວດີຫຼືຂ່າວບໍ່ດີ ສ່ຽວ
ກ. ເອີ! ເອີ້ນກັນສ່ຽວແນວກໍຢາກເວົ້າໃຫ້ຟັງຢູ່
ແຕ່ເປັນເຣື່ອງຄວາມລັບແທ້ໆເດີ້ ໂຕຢ່າເວົ້າຕໍ່ໃຫ້ໃຜຮູ້ເດັດຂາດໃດເດີ້
ຄ. ເອີ້ ເຊື່ອນ່າ ຖ້າບໍ່ພໍ້ຄືນເຮົາບໍ່ເວົ້າດອກນ່າ
ໃຜຈະໄປເວົ້າໃຫ້ຫມາຟັງ

ກ. ແມ່ນເຣື່ອງຄໍຂາດບາດຕາຍເດີ້ສ່ຽວເດີ້ ເຮົາບໍ່ໄດ້ເວົ້າຫຼິ້ນ

ຄ. ຫວ້ອຍແມ່ນຊິເວົ້າຫລືບໍ່ເວົ້າເກາະດຽວນີ້ ?

ກ. ບື໊ະ ຄືວ່າໃຈຮ້ອນແທ້ ! ໂຕກໍໄດ້ອ່ານຕື້ວໃນເວທີຂອງເຮົາ ທີ່ເວົ້າກັນເຣື່ອງພວກເກີດເຈັບປ່ວຍຢ່າງກະທັນຫັນ ໂດຍບໍ່ຮູ້ສາເຫດ ເວລາຂຶ້ນຍືນກັບຄືນພາຍຫລັງທີ່ເມືອຢາມບ້ານ

ຄ. ເອີ ໄດ້ອ່ານຢູ່ ຜູ້ສຸດທ້າຍທີ່ເສັຽຊີວິດນີ້ ຄືວ່າມີນາມສະກຸນ ຊຸມພັນພັກດີ ແມ່ນຕື່ວເນາະ ?

ກ. ເຮີ້ຍ ! ບັກສ່ຽວ ອັນນີ້ເມ່ນເຣື່ອງສົດໆຮ້ອນໆ ຫາກໍຜ່ານມາສອງອາທິດນີ້ນ່າ

ຄ. ຕາຍ ! ເຮົາບໍ່ຮູ້ເດີ້ ເວົ້າໃຫ້ຟັງແດ່

ກ. ມີຕາຍອີກແລ້ວ ຄົນຢູ່ ເມີແລ໊ງ ນີ້ນ່າ

ຄ. ຢູ່ເມີແລ໊ງເຮົາກໍຮູ້ແຈ່ຫມໍລຳຄຳພາຫັ້ນແລ້ວ

ກ. ຜູ້ຕາຍມີ ນາມສະກຸນວ່າ ສາຍສມອນ ແຕ່ເຮົາຈື່ຊື່ບໍ່ໄດ້
ຄ. ເປັນຫຍັງຈຶ່ງຕາຍ ?
ກ. ແບບດຽວກັບກໍຣະນີອື່ນໆ ເມື່ອຢາມບ້ານ ພໍແຕ່ລຶງຍີນ
ມາຮອດເມືອງຝຣັ່ງກໍຫມົດລົມຫາຍໃຈ ອາການເຈັບກໍ
ມີຢູ່ເວລານັ່ງຍົນມາພຸ້ນແລ້ວ
ຄ. ພວກນາຍແພດ ເຂົາວ່າແນວໃດ ?
ກ. ນັບວ່າເປັນເທື່ອທຳອິດ ທີ່ດອກເຕີ້ ບອກສາເຫດຢ່າງແຈ້ງຊັດ
ຄ. ເຂົາວ່າແນວໃດ ?
ກ. ຫມໍບອກວ່າ ແມ່ນຢາພິດ ບໍ່ມີສີງໃສ ມີຕຸ່ມຜຸດພົ້ນອອກມາ
ຈາກຕົນຕົວຂອງຄົນຕາຍ ຫມໍບໍ່ໃຫ້ຜູ້ໃດເຂົ້າມາໃກ້
ຄ. ຕາຍ ຮ້າຍແຮງປານນັ້ນພຸ້ນວະສ່ຽວ ແລ້ວຮູ້ຮ້າຍລະອຽດ
ກ່ຽວກັບພິດທີ່ວ່ານີ້ບໍ່ ?

ກ. ສ່ຽວເອີຍ ! ເຮົາໄດ້ຍິນມາແນວນີ້ ເຮົາໂລດບໍ່ຢາກເມືອເມືອງ ລາວອີກແລ້ວແຫລະ ແມ່ນຢາຂ້າແມງໄມ້ ຟລໍຣິດອນ ນີ້ນ່າ ຜູ້ປອງຮ້າຍລັກເອົາປົນໃສ່ໃນເຄື່ອງດື່ມໃຫ້ກິນ ໂຕຈະຮູ້ເນື່ອວະ

ຄ. ໂອ ເປັນແນວນັ້ນເນາະ ແລ້ວແມ່ນເຂົາຢາກຂ້າເຮົາເພື່ອຫຍັງ

ກ. ເປັນການຂ້າລ້າງໂຄດສ່ຽວເອີຍ ມັນແມ່ນແຜນເລິກຊຶ້ງ ແນບນຽນ ສົມຮູ້ເປັນໃຈກັນມາແຕ່ຂັ້ນຍອດ ເພາະເລື່ອງແນວນີ້ ແມ່ນທາງ ຂັ້ນຍອດເຣີ່ມຂຶ້ນກ່ອນ ຕາຍກັນມາຫຼາຍສິບແລ້ວ ອາດເປັນແຜນຂອງ ນາຍເຫນືອຫົວວຽດພຸ້ນແລ້ວຄິດຄົ້ນມາ ເພື່ອປາບປາມແບບງຽບໆ ຕໍ່ມາກໍແມ່ນປະຊາຊົນ ພີ່ນ້ອງ ຫຼືຫມູ່ຄູ່ພວກເຮົານີ້ແລ້ວທີ່ນໍາ ມາໃຊ້ດ້ວຍເຫດຜົນນາໆປະການ ຕົວຢ່າງ ຊັງນໍ້າຫນ້າເຈົ້າບໍ່ ບໍ່ຢາກໃຫ້ເຈົ້າຢູ່ເພື່ອມາທວງເຮືອນຄືນບໍ່ ດັ່ງນີ້ເປັນຕົ້ນ

ຄ. ຫ້ວຍ ຕາຍຄັກໆ ສໍາພໍໂຕບໍ່ຢາກຄືນເມືອຫັ້ນແລ້ວເນາະ

ມັນອັນຕະລາຍແທ້ຕົວນີ້

ກ. ບໍ່ແມ່ນເຮົາເວົ້າຫຼິ້ນເດີ້ສ່ຽວ ນີ້ແຫຼະເຮົາຈຶ່ງບໍ່ຢາກເມືອອີກ
ເຮົາບໍ່ຫວງເອົາເຮືອນເຮົາອີກແລ້ວ

ຄ. ຄັນຊັ້ນ ມັນເອົາຢາເບື່ອແນວນັ້ນໃຫ້ເຮົາກິນແບບໃດ ?

ກ. ລັກປະສົມ ໃສ່ເຫລົ້າຫລືຕອນເອົານໍ້າໃຫ້ກິນຊັ້ນຕົວສ່ຽວ
ມັນບໍ່ໃຫ້ເຫັນດອກ

ຄ. ນັ້ນ ປານນັ້ນບໍ່ຢາກໃຫ້ເວົ້າໄປທາງໃດ ບໍ່ເວົ້າໃຜຈະຮູ້

ກ. ຍັງມີອີກສ່ຽວ ບໍ່ແມ່ນແຕ່ ຟລໍອິດອນ ມີອີກແນວນຶ່ງທີ່
ເຂົາເອີ້ນວ່າ "ກ້ອນກິດ" ມັນແມ່ນເອົານໍ້າກິດ ແຫ້ງນີ້ແຫຼະ
ໄປໃສ່ຕູ້ເຢັນ ແຊ່ເປັນນໍ້າກ້ອນໆນ້ອຍໆ ແລ້ວລັກຖິ້ມປ໊ອກ
ໃສ່ຈອກເຫຼົ້າ ຫຼືຈອກນໍ້າຂອງໂຕ ກິນລົງໄປນໍ້າກິດກໍຄ່ອຍໆ
ກັດໃສ້ຂອງໂຕ ປົວແນວໃດກໍບໍ່ໄດ້ ບໍ່ຕາຍທັນທີທັນໃດ

ພໍດີໃຫ້ໂຕໄດ້ມີໂອກາດຂີ່ຍືນກັບມາຕາຍຢູ່ປະເທດທີ່ສາມ

ຄ. ໂອ້ຍ ຟັງແລ້ວຂົນຫນາວລຸກ ຄັນຊັ້ນເຮົາຈະເຮັດແນວໃດ ?

ກ. ເຮັດແນວໃດກໍບໍ່ໄດ້ແລ້ວສ່ຽມເອີ້ຍ ມີແຕ່ບໍ່ເມືອຫັ້ນແລ້ວ
ດີກວ່າ ຫລືຖ້າເມືອກໍໃຫ້ຣະວັງດີໆ ບໍ່ຢາສກຣະວັງ
ກໍບໍ່ຕ້ອງເມືອ

ຄ. ຟັງຂ່າວນໍາໂຕເທື່ອໃດ ເຮົາໂລດອ່ອນກໍາລັງໃຈ
ແຕ່ຊໍ້າວ່າຢາກຟັງ ເຮົາຖືເປັນຄວາມລັບບໍ່ໄດ້ດອກເດີ້
ເຮົາຈໍາເປັນຕ້ອງໃຫ້ຜູ້ອື່ນຮູ້ນໍາ ຢ່າວ່າຊັ້ນວ່າຊີ້ເນີ້

ກ. ເອົາແຕ່ໂຕຈະຄຶດເຖາະສ່ຽວ ເຮົາເມື່ອຍແລ້ວ

ຄ. ຢ່າຟ້າວທໍ້ແທ້ນ່າ ຊີວິດຄືການຕໍ່ສູ້ ມື້ຫນ້າພໍ້ກັນໃຫມ່

ກ. ພໍ້ກັນໃຫມ່ສ່ຽວ ບອກແມ່ສ່ຽວແດ່ ວັນເສົາຫນ້າ
ເຮົາຈະພາເມັຽເຮົາໄປຢາມພວກໂຕ

ຄ. ໂອເຄ ! ເອົາລາບເສືອແນວ ໂຕພັກເນາະສ່ຽວເນາະ ?

ກ. ເອີ ! ກໍມີແຕ່ເຮົາສອງຄືນນີ້ແລ້ວກິນໄດ້ ຜູ້ຍ່າຜູ້ຍິງພວກເຮົາ ບໍ່ກິນຊີ້ນງົວເດ້ ມັນຊິບໍ່ຍາກເບາະ ເອົາກ້ອຍປາກໍໄດ້ໄດ໋ສ່ຽວ

ຄ. ເອີ ເຮົາຊິຖາມແມ່ເຈົ້າເຮືອນເບິ່ງເດີ້ ໂຊກດີ !

ປຣະສິທ